ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

老挝人民民主共和国

和平　独立　民主　统一　繁荣

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 005/ບລຈ

老-中证券[司]字第005号

ນະຄອນຫຼວງວຽງຈັນ, ວັນທີ 5 ກັນຍາ 2025

2025年9月5日，首都万象

ມະຕິ

ກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ສະໄໝສາມັນ ປະຈຳປີ 2024

老-中证券公众公司2024年度股东大会

决议

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;

  根据2024年12月11日证管委颁发的第15号《证券公司及上市公司报告及信息披露条例》（修订版）；
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;

  根据2018年9月27日老交所颁发的第008号《信息披露制度》；
- ອີງຕາມ ກົດລະບຽບ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະບັບເລກທີ 003/ບລຈ, ລົງວັນທີ 14 ຕຸລາ 2024.

  根据2024年10月14日订立的《老-中证券公众公司章程》（老-中证券[司]字第003号）。

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ໄດ້ຈັດກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ປະຈຳປີ 2024 ເມື່ອວັນທີ 5 ກັນຍາ 2025 ເວລາ 9:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍການເປັນປະທານຂອງ **ທ່ານ ໝູ່ໄຊ ພູມສຸວັນ ປະທານສະພາບໍລິຫານ ບລຈ**, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 41 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 17 ທ່ານ, ຖືຮຸ້ນລວມ 1,083,234,900 ຮຸ້ນ ຄິດເປັນ 97.49% ຂອງຈຳນວນຮຸ້ນທັງໝົດຂອງ ບລຈ.

老-中证券公众公司（简称“老-中证券”）于 2025 年 9 月 5 日上午 9:00，在老挝万象市赛色塔县蓬覃村的老挝证券交易所（老交所）大楼 8 楼大会议室召开了 2024 年度股东大会。会议由老-中证券董事长努赛·普苏万先生主持。共有 41 名股东出席，其中，17 名股东授权代表参会。参会股东合计持有股份 1,083,234,900 股，占公司总股本的 97.49%。

ກອງປະຊຸມຜູ້ຖືຮຸ້ນ ໄດ້ພິຈາລະນາ ແລະ ມີມະຕິ ດັ່ງນີ້:

股东会决定

ວາລະ 1: ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ແລະ ແຜນການດຳເນີນງານ ປະຈຳປີ 2025 ຂອງ ບລຈ

议案一：审议老-中证券 2024 年度工作报告暨 2025 年度经营计划

ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ແລະ ແຜນການດຳເນີນງານ ປະຈຳປີ 2025 ຂອງ ບລຈ.

审议通过老-中证券 2024 年度工作报告暨 2025 年度经营计划。

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东大会一致通过决议，投票结果如下：

- ເຫັນດີ 1,080,153,300 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,080,153,300 票，占出席会议总票数的 100.00%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0.00%

ໝາຍເຫດ: ເນື່ອງຈາກວ່າໃນ ວາລະ 1 ມີຜູ້ເຂົ້າຮ່ວມຈຳນວນ 39 ທ່ານ, ຖືຮຸ້ນລວມ 1,080,153,300 ຮຸ້ນ.

注：议案一的参会股东共 39 名，合计持有股份 1,080,153,300 股。

ວາລະ 2: ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ບລຈ

议案二：审议《老-中证券 2024 年度审计报告》

ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ບລຈ, ທີ່ຜ່ານການກວດສອບໂດຍບໍລິສັດກວດສອບພາຍນອກ.

审议通过《老-中证券 2024 年度审计报告》。

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东大会一致通过决议，投票结果如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,083,234,900 票，占出席会议总票数的 100.00%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0.00%

ວາລະ 3: ພິຈາລະນາ ແລະ ຮັບຮອງ ປັບປຸງບາງເນື້ອໃນ ຂອງກົດລະບຽບ ບລຈ

议案三：审议变更老-中证券公司章程部分内容

ກອງປະຊຸມຜູ້ຖືຮຸ້ນ ໄດ້ເຫັນດີຮັບຮອງໃຫ້ດຳເນີນການປັບປຸງ ມາດຕາ 8 ທຶນຈົດທະບຽນ, ມາດຕາ 10 ຮຸ້ນ ແລະ ມາດຕາ 13 ໂຄງປະກອບຂອງຜູ້ຖືຮຸ້ນ ຂອງ ກົດລະບຽບ ບລຈ, ພ້ອມທັງມອບສິດໃຫ້ຄະນະອຳນວຍການຍື່ນໜັງສືສະເໜີຕໍ່ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເພື່ອປັບປຸງມາດຕາທີ່ກ່າວມາຂ້າງເທິງ ຂອງ ກົດລະບຽບ ບລຈ.

审议同意变更老-中证券公司章程有关第八条 注册资本、总股本，第十三条 股东结构相关内容，同意授权管理层向特区管理委员会申请变更上述内容。

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东大会一致通过决议，投票结果如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,083,234,900 票，占出席会议总票数的 100.00%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0.00%

ວາລະ 4: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ບລຈ

议案四：审议老-中证券 2024 年度分红方案

ກອງປະຊຸມຜູ້ຖືຮຸ້ນ ໄດ້ເຫັນດີຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ບລຈ ຄືດັ່ງນີ້:

- ເງິນປັນຜົນ: 5 ກີບ/ຮຸ້ນ;
- ຈຳນວນເງິນປັນຜົນທັງໝົດ: 5,555,556,000 ກີບ;
- ມື້ຈ່າຍເງິນປັນຜົນ: 12 ກັນຍາ 2025.

股东大会审议通过老-中证券 2024 年度如下分红方案：

- 分红：5 基普/股；
- 分红金额：5,555,556,000 基普；
- 分红派息日：2025 年 9 月 12 日。

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东大会一致通过决议，投票结果如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,083,234,900 票，占出席会议总票数的 100.00%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0.00%

ວາລະ 5: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານຂອງ ບລຈ

议案五：审议老-中证券员工奖励方案

ພິຈາລະນາ ແລະຮັບຮອງເອົາ 1,880,000,000 ກີບ ຂອງສະຫວັດດີການພະນັກງານ ທີ່ບໍ່ໄດ້ແບ່ງປັນ ຫຼື ບໍ່ໄດ້ສະເໜີຫັກອອກ, ໂດຍອີງຕາມຄັງສະຫວັດຕິການ ທີ່ບໍ່ໄດ້ແບ່ງປັນ ຫຼື ຄິດໄລ່ຈາກ 2018-2023, ຈ່າຍເປັນເງິນສິດໃຫ້ຄະນະອຳນວຍການ ແລະ ພະນັກງານຫັກຈາກກຳໄລສຸດທິ ຂອງ ປີ 2024. ແຜນການໃຫ້ໂບນັດພະນັກງານມີລາຍລະອຽດຄືດັ່ງນີ້:

1. ໂບນັດສຳລັບຄະນະອຳນວຍການ: 880,000,000 ກີບ:
   ຜູ້ອຳນວຍການ: 320,000,000 ກີບ;
   ຮອງຜູ້ອຳນວຍການ (2 ທ່ານ) : 280,000,000 ກີບ/ທ່ານ.
2. ໂບນັດສຳລັບພະນັກງານທັງໝົດສ່ວນທີ່ເຫຼືອ 1,000,000,000 ກີບ, ໂດຍຄະນະອຳນວຍການຈະດຳເນີນການຈັດສັນ ໂດຍເບິ່ງຕາມຜົນງານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແລະ ປະລິມານວຽກໂດຍລວມ ຂອງແຕ່ລະບຸກຄົນເປັນຕົວກຳນົດ.

审议同意将 2018-2023 年未发放和未申请计提的员工福利金共计 1,880,000,000 基普从 2024 年净利润中计提，以现金形式奖励老-中证券管理层和全体员工。具体奖励方案如下：

1、管理层奖励 880,000,000 基普：
   总经理：320,000,000 基普；
   副总经理（2 名）：280,000,000 基普/人。
2、剩余全体员工奖励 1,000,000,000 基普，由管理层根据个人业绩贡献和工作量综合评定后进行合理分配。

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东大会一致通过决议，投票结果如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
  赞成票：1,083,234,900 票，占出席会议总票数的 100.00%
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ
  反对票：0 票，占出席会议总票数的 0.00%

ວາລະ 6: ພິຈາລະນາ ແລະ ຮັບຮອງ ແຜນການປັບປຸງເງິນເດືອນຂອງພະນັກງານ ບລຈ

议案六：审议老-中证券员工薪酬调整方案

ພິຈາລະນາ ແລະຮັບຮອງການແຜນການປັບປຸງເງິນເດືອນ ຂອງ ພະນັກງານ ບລຈ ດັ່ງນີ້:

1. ເພີ່ມລະດັບເງິນເດືອນພື້ນຖານຂອງພະນັກງານຂຶ້ນ 100%, ໂດຍເລີ່ມຈັດຕັ້ງປະຕິບັດນັບແຕ່ເດືອນມັງກອນ ປີ 2025 ເປັນຕົ້ນໄປ. ຫຼັງຈາກປັບປຸງເງິນເດືອນແລ້ວ, ຄ່າໃຊ້ຈ່າຍເງິນເດືອນພື້ນຖານຈະບໍ່ເກີນ 720 ລ້ານກີບ/ເດືອນ. ເພື່ອກວມເອົາຄວາມຕ້ອງການຂອງຈຳນວນພະນັກງານທີ່ເພີ່ມຂຶ້ນໃນ

ອະນາຄົດ ແມ່ນໃຫ້ຄະນະອຳນວຍການຄວບຄຸມຄ່າໃຊ້ຈ່າຍລວມຂອງເງິນເດືອນພື້ນຖານບໍ່ເກີນ 800 ລ້ານກີບ/ເດືອນ.

2. 50% ຂອງເງິນເດືອນພື້ນຖານປະຈຸບັນ ຖືເປັນເງິນເດືອນຕາມຜົນງານ, ໂດຍມີແຜນອ້າງອີງດັ່ງນີ້: ມອບສິດໃຫ້ຄະນະອຳນວຍການພາຍຫຼັງຮັບປະກັນການເບີກຈ່າຍເງິນເດືອນຕາມຜົນງານ, ພາຍໃຕ້ເງື່ອນໄຂ ROE ຂອງ ບລຈ ຈະບໍ່ຕ່ຳກວ່າ 9%, ສາມາດອອກໃຫ້ຕາມຫຼັງ ບົດລາຍງານການກວດສອບປະຈຳປີຂອງທຸກໆປີ ໄດ້ຜ່ານການຮັບຮອງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນແລ້ວ.
3. ຖ້າຫາກ ບລຈ ປາກົດມີການຂາດທຶນຢ່າງຕໍ່ເນື່ອງ ຈະຕ້ອງໄດ້ມີການປັບປຸງລະບົບເງິນເດືອນ.
4. ມອບສິດໃຫ້ຄະນະອຳນວຍການດຳເນີນການປະຕິບັດຕົວຈິງ ອີງຕາມມະຕິກອງປະຊຸມຜູ້ຖືຮຸ້ນ.

股东大会审议通过以下老-中证券员工薪资调整方案：

1、员工固定基础薪资上浮 100%，自 2025 年 1 月开始执行。薪酬调整后，基础薪酬开支不超过 7.2 亿基普/月。涵盖未来增加员工人数需求，要求管理层控制基础薪酬开支不高于 8 亿基普/月。
2、现有薪资 50%部分作为绩效工资，发放方案如下：
授权管理层在确保发放绩效工资后，公司净资产收益率不低于 9%的情况下，可在每年年度审计报告经股东大会审议通过后补发。
3、如老-中证券出现连续亏损，应对薪酬体系做出调整。
4、授权管理层负责按股东大会决议落实。

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东大会一致通过决议，投票结果如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,083,234,900 票，占出席会议总票数的 100.00%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0.00%

ວາລະ 7: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນອຸດໜູນໃຫ້ ສະມາຊິກສະພາບໍລິຫານ ບລຈ

议案七：审议老-中证券董事会津贴方案

ກອງປະຊຸມຜູ້ຖືຮຸ້ນ ໄດ້ເຫັນດີຮັບຮອງການເບີກຈ່າຍເງິນອຸດໜູນໃຫ້ສະມາຊິກສະພາບໍລິຫານ ໂດຍເບີກຈ່າຍເປັນທຸກໆເຄິ່ງປີ, ຕາມມາດຕະຖານການເບີກຈ່າຍດັ່ງນີ້:

1. ປະທານສະພາບໍລິຫານ: 35,000,000 ກີບ;
2. ຮອງປະທານສະພາບໍລິຫານ: 30,000,000 ກີບ;
3. ສະມາຊິກສະພາບໍລິຫານ (6 ທ່ານ): 25,000,000 ກີບ/ທ່ານ.

*ໝາຍເຫດ: 1. ຍ້ອນທ່ານຜູ້ອຳນວຍການ ແລະ ສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ ໄດ້ຮັບໂບນັດຂອງຄະນະອຳນວຍການແລ້ວ ແລະ ຈະບໍ່ໄດ້ຮັບເງິນອຸດໜູນຊ້ຳອີກໃນສ່ວນຂອງສະມາຊິກສະພາບໍລິຫານ;

2. ຫຼັງຈາກຮັບປະກັນການເບີກຈ່າຍເງິນອຸດໜູນຂອງສະມາຊິກສະພາບໍລິຫານແລ້ວ, ຈະໃຫ້ການເບີກຈ່າຍພາຍໃຕ້ສະພາບຂອງ ROE ຂອງ ບລຈ ບໍ່ຕ່ຳກວ່າ 9% ຕໍ່ປີ. ກໍລະນີ ROE ປະຈຳປີຈາກຜົນການດຳເນີນງານ ຕ່ຳກວ່າ 9%, ເວລານັ້ນຈະບໍ່ມີການເບີກຈ່າຍເງິນອຸດໜູນໃຫ້ແກ່ສະມາຊິກສະພາບໍລິຫານ;

3. ການເບີກຈ່າຍເງິນອຸດໜູນຂອງສະມາຊິກສະພາບໍລິຫານຈະເລີ່ມແຕ່ວັນທີ 1 ມັງກອນ 2025 ເປັນຕົ້ນໄປ.

股东大会同意根据公司经营情况每半年发放一次董事会津贴，按如下标准发放：

1、 董事长：35,000,000 基普；

2、 副董事长：30,000,000 基普；

3、 董事（6 名）：25,000,000 基普/人。

*注：1、总经理兼执行董事参与公司管理层激励体系，不参与领取董事津贴；

2、在确保董事津贴发放后，公司净资产收益率不低于 9%的情况下给予发放。经营业绩年化净资产收益率低于 9%的情形，当期不发放董事津贴；

3、董事会津贴发放起始日期为 2025 年 1 月 1 日。

ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິເຫັນດີ ດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

股东大会一致通过决议，投票结果如下：

- ເຫັນດີ 1,083,234,900 ສຽງ ຄິດເປັນ 100.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

赞成票：1,083,234,900 票，占出席会议总票数的 100.00%

- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

反对票：0 票，占出席会议总票数的 0.00%

ປະທານກອງປະຊຸມ

会议主席

ທ່ານ ໜູໄຊ ພູມສຸວັນ

努赛·普苏万